ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************************

<u>ອົງການອະທິໄອຍະການ</u>

<u>ປະຊາຊົນ ແຫ່ງ ສປປ ລາວ.</u>

ເລກທີ 05 /ອອປ.

ວຽງຈັນ, ວັນທີ 6 / 5 /2003.

# ຄໍາສັ່ງແນະນໍາ

ເຖິງ: ໄອຍະການປະຊາຊົນແຂວງ, ກໍາແພງນະຄອນ ແລະ ເຂດພິເສດ.

ເລື່ອງ: ໃຫ້ເສີມຂະຫຍາຍການພົວພັນແລກປ່ຽນບົດຮຽນ ກັບ ໄອຍະການ ປະຊາຊົນແຂວງຂອງ ສສ ຫວຽດນາມ ທີ່ມີຊາຍແດນຕິດຈອດກັນ.

- ອີງຕາມ ບົດບັນທຶກລະຫວ່າງຄະນະຜູ້ແທນອົງການອະທິໄອຍະການປະຊາຊົນ ແຫ່ງ ສປປ ລາວ ແລະ ຄະນະຜູ້ແທນສະຖາບັນໄອຍະການປະຊາຊົນສູງສຸດ ແຫ່ງ ສສ ຫວຽດນາມ ທີ່ໄດ້ລົງນາມໃນຄັ້ງວັນທີ 6/11/1997 ແລະ ຄັ້ງວັນທີ 30/05/2002, ທີ່ນະຄອນຫຼວງວຽງຈັນ. ປີ 2003

- ອີງຕາມ ແຜນການຮ່ວມມືດ້ານວິຊາການ ລະຫວ່າງ ອົງການອະທິໄອຍະການປະຊາຊົນ ແຫ່ງ ສປປ ລາວ ກັບສະຖາບັນໄອຍະການປະຊາຊົນສູງສຸດ ແຫ່ງ ສສ ຫວຽດນາມ ໃນສົກປີ 2004 ສະບັບເລກທີ 201/ອອປ, ລົງວັນທີ 05/05/2003.

ບົນຈິດໃຈດັ່ງກ່າວນັ້ນ, ອົງການອະທິໄອຍະການປະຊາຊົນ ຈຶ່ງມີຄໍາສັ່ງແນະນໍາບັນດາໄອຍະການປະຊາຊົນແຂວງ, ກໍາແພງນະຄອນ ແລະ ເຂດພິເສດ ຊາບແລະ ຈັດຕັ້ງປະຕິບັດດັ່ງນີ້:

1./ ໃຫ້ເອົາໃຈໃສ່ເສີມຂະຫຍາຍການພົວພັນຮ່ວມມືແລກປ່ຽນບົດຮຽນ ກັບໄອຍະການປະຊາຊົນແຂວງ ຂອງ ສສ ຫວຽດນາມ ທີ່ມີຊາຍແດນຕິດຈອດກັນຕາມແຕ່ລະກໍລະນີ ແລະ ເງື່ອນໄຂຄວາມອາດສາມາດຕົວຈິງຂອງແຕ່ລະແຂວງ.

2./ ຕ້ອງໄດ້ສ້າງແຜນການລະອຽດ ເພື່ອນໍາສະເໜີນໍາແຂວງ ເພື່ອພິຈາລະນາອະນຸມັດ.

3./ ກ່ອນ ແລະ ຫຼັງການພົວພັນຕ້ອງໄດ້ລາຍງານຂໍຄວາມຄິດຄວາມເຫັນຈາກອົງການອະທິໄອຍະການ ເປັນຕົ້ນດ້ານວິຊາການ ແລະ ອື່ນໆ.

ດັ່ງນັ້ນ, ຈຶ່ງແຈ້ງມາໃຫ້ຊາບ ແລະ ຈັດຕັ້ງປະຕິບັດ ຕາມຄໍາສັ່ງແນະນໍາສະບັບນີ້ຢ່າງຖືກຕ້ອງ.

ລ. ອະທິໄອຍະການປະຊາຊົນ.

ບຸນປອນ ສັງສົມສັກ